ໜ່ວຍງານສາທາລະນະສຸກແລະບໍລິການມະນຸດລັດຄາລິຟໍເນຍ

**ພະແນກບໍລິການດ້ານພັດທະນາການ**

1215 O Street, Sacramento, CA 95814

www.dds.ca.gov

PETE CERVINKA
*ຜູ້ອຳນວຍການ*

GAVIN NEWSOM
*ຜູ້ວ່າການລັດ*

ວັນທີ 16 ມັງກອນ 2025 G-2024-Self-Determination Program-002 REV

ເຖິງ: ຜູ້ອຳນວຍການບໍລິຫານສູນເຣຈິນັລ

ເລື່ອງ: ການຈັດສັນເງິນທຶນສຳລັບໂຄງການລະບຸຕົນເອງ ປີງົບປະມານ 2024-25

*ຈົດໝາຍຂອງໂຄງການສະບັບ G-2024-Self-Determination Program-002 ທີ່ອອກໃນວັນທີ 27 ທັນວາ 2024 ນີ້ໄດ້ຖືກດັດແກ້ຕາມທີ່ສະແດງຢູ່ໃນໜ້າທີ 3 ຂອງເອກະສານຄັດຕິດ A ໂດຍຂີດເສັ້ນຂ້າ ແລະ ເປັນຕົວອັກສອນຂີດເສັ້ນໃຕ້. ບໍ່ມີການປ່ຽນແປງອື່ນໆ.*

ຕາມປະມວນກົດໝາຍສະຫວັດດີການແລະສະຖາບັນ (WIC) ມາດຕາ 4685.8(f) ໄດ້ມີການຈັດສັນເງິນທຶນໃຫ້ແກ່ສູນເຣຈິນັລສຳລັບໂຄງການລະບຸຕົນເອງ (SDP) ປີງົບປະມານ 2024-25 ຜ່ານການຈັດສັນການແກ້ໄຂສັນຍາ A-1 ເມື່ອວັນທີ 6 ກັນຍາ 2024. ຈຸດປະສົງຂອງຈົດໝາຍສະບັບນີ້ແມ່ນເພື່ອໃຫ້ແນວທາງໃນການນຳໃຊ້ເງິນທຶນເຫຼົ່ານີ້ ລວມທັງຄວາມຮ່ວມມືທີ່ຈຳເປັນກັບຄະນະກຳມະການທີ່ປຶກສາອາສາສະໝັກທ້ອງຖິ່ນ (LVACs) ໃນການກຳນົດລຳດັບຄວາມສຳຄັນທ້ອງຖິ່ນໃນການຈັດຫາເງິນທຶນໃຫ້. ການຈັດສັນດັ່ງກ່າວບໍ່ລວມເງິນທຶນສະໜັບສະໜູນຄະນະກຳມະການທີ່ປຶກສາການລະບຸຕົນເອງໃນລະດັບລັດ.

ມາດຕາ 4685.8(f) ຂອງ WIC ລະບຸວ່າຈະຕ້ອງນຳໃຊ້ເງິນທຶນເຫຼົ່ານີ້ເພື່ອເພີ່ມສັກກາຍະພາບຂອງຜູ້ເຂົ້າຮ່ວມໂຄງການ SDP ໃນການດຳເນີນຊີວິດຂອງຕົນເອງ ແລະຊ່ວຍໃຫ້ພະແນກແລະສູນເຣຈິນັລດຳເນີນໂຄງການໄດ້ສຳເລັດ. ນອກຈາກນີ້ ລັດຖະບັນຍັດຍັງກຳນົດໃຫ້ຕ້ອງໃຊ້ເງິນທຶນເພື່ອຕອບສະໜອງຄວາມຈຳເປັນຂອງຜູ້ເຂົ້າຮ່ວມ, ໃຊ້ບໍລິການໄດ້ງ່າຍຂຶ້ນແລະມີຄວາມສະເໝີພາບຫຼາຍຂຶ້ນ ແລະຫຼຸດຜ່ອນຄວາມບໍ່ເທົ່າທຽມກັນ ແລະເພື່ອດຳເນີນໂຄງການ ລວມທັງຄ່າໃຊ້ຈ່າຍກ່ຽວກັບສິ່ງຕໍ່ໄປນີ້:

- ການສັນຫາແລະຝຶກອົບຮົມການວາງແຜນທີ່ເນັ້ນບຸຄຄົນເປັນສູນກາງ ແລະຜູ້ໃຫ້ບໍລິການດ້ານການກຳກັບດູແລຕົນເອງ (SD) ແລະຜູ້ຊ່ວຍເຫຼືອອິດສະຫຼະ ໂດຍເນັ້ນໃສ່ການເພີ່ມຈຳນວນຜູ້ໃຫ້ບໍລິການສອງພາສາແລະສອງວັດທະນະທຳ;
- ການຝຶກອົບຮົມຮ່ວມສຳລັບຜູ້ເຂົ້າຮ່ວມ, ຄອບຄົວ, ສູນເຣຈິນັລ, ສະມາຊິກຄະນະກຳມະການ LVAC ແລະອື່ນໆ ໂດຍມຸ່ງເນັ້ນການຝຶກອົບຮົມຜູ້ສະໜັບສະໜູນຊ່ວຍເຫຼືອຕົນເອງແລະຄອບຄົວຈາກຊຸມຊົນທີ່ຫຼາກຫຼາຍທີ່ເປັນຊົນກຸ່ມນ້ອຍທີ່ບໍ່ໄດ້ຮັບໂອກາດເທົ່າທຽມກັນກັບປະຊາກອນເຊື້ອຊາດອື່ນໃນໂຄງການ SDP;
- ຄວາມຊ່ວຍເຫຼືອໃນການຈັດທຳແຜນການໃຊ້ຈ່າຍ;

- ກຸ່ມຄວາມຮ່ວມມື/ການປະຊຸມປະຕິບັດການເພື່ອສົ່ງເສີມການຮຽນຮູ້ແລະໂອກາດໃນການແກ້ໄຂບັນຫາຢ່າງຕໍ່ເນື່ອງ ແລະ
- ການຝຶກອົບຮົມ/ການປະຊຸມປະຕິບັດການເພື່ອຄວາມພ້ອມຂອງນາຍຈ້າງ ເພື່ອໃຫ້ຄວາມຮູ້ແກ່ຜູ້ເຂົ້າຮ່ວມທີ່ສົນໃຈໃຊ້ຮູບແບບນາຍຈ້າງຮ່ວມກັນແລະນາຍຈ້າງດ່ຽວ.

ຄະນະກຳມະການ LVAC ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດ ແລະການກຳກັບດູແລໂຄງການ SDP. ດັ່ງນັ້ນ ສູນສູນເຣຈິນັລ ແລະຄະນະກຳມະການ LVAC ຈະຕ້ອງເຮັດວຽກຮ່ວມກັນເພື່ອຈັດລຳດັບຄວາມສຳຄັນຂອງການນຳໃຊ້ເງິນທຶນທີ່ມີຢູ່ເພື່ອຕອບສະໜອງຄວາມຈຳເປັນຂອງຜູ້ເຂົ້າຮ່ວມໃນທ້ອງຖິ່ນ. ສາມາດນຳເງິນທຶນໄປໃຊ້ຈ່າຍໄດ້ຫຼັງຈາກບັນລຸຂໍ້ຕົກລົງກ່ຽວກັບຄວາມຈຳເປັນໃນທ້ອງຖິ່ນແລ້ວເທົ່ານັ້ນ. ກະລຸນາເບິ່ງເອກະສານຄັດຕິດ A ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການນຳໃຊ້ເງິນທຶນທີ່ອາດຈະເກີດຂຶ້ນ, ຈຳນວນເງິນທຶນທີ່ມີຢູ່ໃນສູນເຣຈິນັລແຕ່ລະພື້ນທີ່ສຳລັບປີງົບປະມານ 2024-25 ແລະຂັ້ນຕອນທີ່ແນະນຳໃນການພິຈາລະນາການນຳໃຊ້ເງິນທຶນ.

ຖ້າຜູ້ເຂົ້າຮ່ວມ ແລະ/ຫຼື ຄອບຄົວມີຄຳຖາມກ່ຽວກັບຈົດໝາຍສະບັບນີ້ ຄວນຕິດຕໍ່ສູນເຣຈິນັລຂອງຕົນ. ຖ້າມີຄຳຖາມຈາກສູນເຣຈິນັລ ຄວນຕິດຕໍ່ສາຂາໂຄງການລະບຸຕົນເອງຂອງພະແນກທີ່ sdp@dds.ca.gov.

ດ້ວຍຄວາມນັບຖື,

*ຕົ້ນສະບັບລົງນາມໂດຍ:*

MICHI A. GATES, Ph.D.
ຮອງຜູ້ອຳນວຍການ ຝ່າຍບໍລິການໂຄງການ

ເອກະສານຄັດຕິດ

ສຳເນົາ: ຜູ້ບໍລິຫານສູນເຣຈິນັລ
ຜູ້ອຳນວຍການສູນເຣຈິນັລ ຝ່າຍບໍລິການຜູ້ບໍລິໂພກ
ຜູ້ອຳນວຍສູນເຣຈິນັລ ຝ່າຍບໍລິການຊຸມຊົນ
ສະມາຄົມໜ່ວຍງານສູນເຣຈິນັລ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ
Pete Cervinka, ພະແນກບໍລິການດ້ານພັດທະນາການ
Carla Castañeda, ພະແນກບໍລິການດ້ານພັດທະນາການ
Ernie Cruz, ພະແນກບໍລິການດ້ານພັດທະນາການ
Jim Knight, ພະແນກບໍລິການດ້ານພັດທະນາການ
Kathleen Dempsey, ພະແນກບໍລິການດ້ານພັດທະນາການ